**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 19 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 19 MAR 2015

# ບົດບັນທຶກກອງປະຊຸມ

ໃນຕອນບ່າຍຂອງວັນທີ 5 ມີນາ 2015 ເວລາ 13:30 ໂມງ ໄດ້ມີການຈັດກອງປະຊຸມສ່ອງແສງວຽກງານສາຍລັດ ປະຈຳເດືອນ 02/2015 ຂຶ້ນ ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທະນາຄານແຫ່ງ ສປປ ລາວ ພາຍໃຕ້ການເປັນປະທານໂດຍ**ທ່ານ ສອນໄຊ ສິດພະໄຊ** ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມຄັ້ງນີ້ມີບັນດາຄະນະກົມ, ທຽບເທົ່າກົມ ແລະ ຄະນະອຳນວຍການຈາກບັນດາທະນາຄານທຸລະກິດລັດ (ທທກ) ເຂົ້າຮ່ວມລາຍລະອຽດດັ່ງລາຍຊື່ທີ່ໄດ້ຄັດຕິດມາພ້ອມນີ້.

**ຜ່ານການລາຍງານ ທີ່ປະຊຸມໄດ້ມີທິດທາງແກ້ໄຂຫຼາຍບັນຫາຕາມການສະເໜີຈາກແຕ່ລະພາກສ່ວນ ດັ່ງນີ້:**

1. ໃຫ້ແຕ່ລະພາກສ່ວນເອົາໃຈໃສ່ຊີ້ນຳນຳພາການເມືອງ-ແນວຄິດພະນັກງານ, ເອົາໃຈໃສ່ຄວາມເປັນເຈົ້າການໃນການປຸກລະດົມພະນັກງານໃຫ້ເຂົ້າຮ່ວມເຄື່ອນໄຫວວຽກງານ 3 ອົງການຈັດຕັ້ງ ມະຫາຊົນ ເປັນຕົ້ນແມ່ນການສ້າງຂະບວນການເພື່ອກະກຽມຕ້ອນຮັບການສະເຫຼີມສະຫຼອງ 2 ວັນປະຫວັດສາດ ຂອງ ສປປ ລາວ ແລະ ໃຫ້ເອົາໃຈໃສ່ວຽກງານປ້ອງກັນ ໃນນີ້: ລວມທັງການປ້ອງກັນທາງດ້ານການເມືອງ-ແນວຄິດ ແລະ ການປ້ອງກັນອາຄານສຳນັກງານໃຫ້ມີຄວາມປອດໄພ;
2. ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ຂອງບໍລິສັດຜະລິດໄຟຟ້າລາວ ຢູ່ຕ່າງປະເທດ (ປະເທດໄທ) ແມ່ນໃຫ້ພາກສ່ວນກ່ຽວຂ້ອງເຜີຍແຜ່ໂຄສະນາສ້າງຄວາມເຂົ້າໃຈໃຫ້ແກ່ສັງຄົມຮັບຊາບ;
3. ມອບໃຫ້ກົມບໍລິການ ແລະ ກົມນະໂຍບາຍເງິນຕາ ຄົ້ນຄວ້າກ່ຽວກັບວຽກງານການຄຸ້ມຄອງການຊື້-ຂາຍເງິນຕາຕ່າງປະເທດ ແລະ ໃຫ້ລາຍງານຂັ້ນເທິງຊາບພາຍໃນ 1 ອາທິດ ໂດຍສະເພາະແມ່ນນະໂຍບາຍອັດຕາແລກປ່ຽນແທດເໝາະແລ້ວ ຫຼື ຍັງ?;
4. ມອບໃຫ້ກົມບັນຊີ-ການເງິນ ແລະ ກົມຄຸ້ມຄອງທະນາຄານທຸລະກິດ ປະສານສົມທົບກັນຕື່ມ ໃນການຈັດຕັ້ງປະຕິບັດມາດຖານບັນຊີສາກົນຂອງທະນາຄານທຸລະກິດ;
5. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອໃຫ້ ສປປ ລາວ ສາມາດຫຼຸດພົ້ນອອກຈາກບັນຊີເທົາ;
6. ກ່ຽວກັບການແຕ່ງຕັ້ງພະນັກງານໄປວຽກງານລັດຖະການຢູ່ຕ່າງປະເທດ ໃນເວລາອັນຮີບດ່ວນ ເຫັນວ່າຄວນປະຕິບັດ ໃນ 2 ລັກຊະນະ ດັ່ງນີ້: ❶ຕອບປະຕິເສດການເຂົ້າຮ່ວມ ຫຼື ❷ສະເໜີຄຳເຫັນຜ່ານກົມຈັດຕັ້ງ ແລະ ພະນັກງານ ເພື່ອລາຍງານຂັ້ນເທິງຕື່ມ;
7. ອັນໃດທີ່ຕິດພັນກັບກົມກ່ຽວຂ້ອງ ມອບໃຫ້ບັນດາກົມກອງທີ່ກ່ຽວຂ້ອງ ເອົາໃຈໃສ່ປະສານສົມທົບກັນເພື່ອແກ້ໄຂວຽກງານທີ່ຄົງຄ້າງ ແລະ ພິຈາລະນາແກ້ໄຂຕາມການສະເໜີຂອງພາກສ່ວນຕ່າງໆ ຕາມຄວາມເໝາະສົມ;
8. ຕິດພັນກັບການແລກປ່ຽນເງິນໃໝ່ ປະເພດໃບ 2.000 ກີບ ແມ່ນເຫັນຄວນຖອດຖອນບົດຮຽນຄືນເປັນຕົ້ນ ທາງດ້ານເຕັກນິກເຕັກໂນໂລຊີ;

**9.** ໃຫ້ທະນາຄານທຸລະກິດລັດ ປະຕິບັດຕາມແຈ້ງການຂອງ ທຫລ ຢ່າງເຂັ້ມງວດ ເປັນຕົ້ນການພິຈາລະນາຄວາມເໝາະສົມການໃຫ້ສິນເຊື່ອ ເປັນເງິນກີບ ແລະ ເງິນຕາຕ່າງປະເທດ, ການຮັບເງິນຝາກເປັນເງິນຕາຕ່າງປະເທດ;

**10.** ສໍາລັບການສິ່ງເສີມຮຽນພາສາຈີນ 300 ປະໂຫຍກ ສໍາລັບລະດັບການນໍາ ແມ່ນໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາການເປີດການສອນນອກໂມງການ ເພື່ອເປັນການຊຸກຍູ້ໃຫ້ພະນັກງານລະດັບການນໍາໄດ້ເຂົ້າຮ່ວມ;

**11.** ກ່ຽວກັບບັນຫາພະນັກງານຢູ່ ທຫລ ພາກເໜືອທີ່ແຂວງຫຼວງພະບາງ ແມ່ນໃຫ້ແຕ່ລະພາກສ່ວນເອົາໃຈໃສ່ຊີ້ນໍາພະນັກງານ ເພື່ອເປັນການປ້ອງກັນທາງດ້ານແນວຄິດ;

**12.** ກ່ຽວກັບສະຖາບັນການເງິນຈຸລະພາກ (ຕົວຢ່າງ: ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ນິວຕັນ) ແມ່ນມອບໃຫ້ກົມກ່ຽວຂ້ອງຄົ້ນຄວ້າມີມາດຕະການແກ້ໄຂ ແລະ ເພີ່ມທະວີການໂຄສະນາໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນສະຖາບັນການເງິນຈຸລະພາກສາມາດຮັບຝາກເງິນຫຍັງໄດ້ແດ່?;

**13.** ກ່ຽວກັບການເກັບລາຍຮັບຂອງ ທຫລ ແມ່ນໃຫ້ພາກສ່ວນກ່ຽວຂ້ອງກວດກາສອດຄ່ອງກັບແຈ້ງການຂອງປະທານປະເທດວ່າດ້ວຍການເກັບລາຍຮັບ, ພ້ອມທັງລາຍງານແຈ້ງການການເກັບຄ່າທໍານຽມຂອງ ທຫລ ໃຫ້ພາກສ່ວນ/ກະຊວງ ກ່ຽວຂ້ອງຮັບຊາບ.

ກອງປະຊຸມໄດ້ປິດລົງໃນ ເວລາ 14:30 ໂມງ ໃນວັນດຽວກັນ.

**ປະທານກອງປະຊຸມ**

ສອນໄຊ ສິດພະໄຊ

ຜູ້ບັນທຶກ

ຄໍາເສີຍ ທົງສະຫວັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

**ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມສ່ອງແສງວຽກງານສາຍລັດ**

**ປະຈຳເດືອນ 02/2015**

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ຕຳແໜ່ງ | ລາຍເຊັນ |
|---|---|---|---|---|
| 1 | ທ່ານ ສອນໄຊ ສິດພະໄຊ | | ຮອງຜູ້ວ່າການ ທຫລ | |
| 2 | ທ່ານ ໜໍ່ແກ້ວ ມຸນີວົງ | ກົມກວດກາ | ຫົວໜ້າກົມ | |
| 3 | ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ | ກົມບັນຊີ-ການເງິນ | ຫົວໜ້າກົມ | |
| 4 | ທ່ານ ສີວິໄລ ພົມມະຈັກ | ກົມເງິນຕາ | ຫົວໜ້າກົມ | |
| 5 | ທ່ານ ສັນຕິ ພົນເມືອງລາວ | ໂຮງພິມທະນະບັດ | ຫົວໜ້າກົມ | |
| 6 | ທ່ານ ນ. ສາຍສະໝອນ ຈັນທະຈັກ | ສຳນັກງານ ຄຄຊ | ຮັກສາການ | |
| 7 | ທ່ານ ອ່ອດ ພົນຊຽງດີ/ນ. ຄຳໜ້າ(?) | ກົມບໍລິການ | ຫົວໜ້າກົມ | |
| 8 | ທ່ານ ວັນຄຳ ວໍລະວົງ | ຕະຫຼາດຫຼັກຊັບລາວ | ຜູ້ອຳນວຍການ | |
| 9 | ທ່ານ ພູຊົງ ຈັນທະຈັກ | ທຄຕລ | ຮັກສາການ ຜ.ອ | |
| 10 | ທ່ານ ນ. ອຸດຕະລາ ແກ້ວຫາວົງ | ຫ້ອງການ | ຮ. ຫົວໜ້າກົມ | |
| 11 | ທ່ານ ຄູນສະໄໝ ວໍລະລາດ | ກອງທຶນປົກປ້ອງຜູ້ຝາກເງິນ | ຮ. ຜູ້ອຳນວຍການ | |
| 12 | ທ່ານ ນ. ວິນຄຳ ລຸນທອນ | ກົມນະໂຍບາຍເງິນຕາ | ຮ. ຫົວໜ້າກົມ | |
| 13 | ທ່ານ ນ. ທິບພະວັນ ຈັນທະຜາສຸກ | ກົມຄຸ້ມຄອງທະນາຄານທຸລະກິດ | ຮ. ຫົວໜ້າກົມ | |

| | | | | |
|---|---|---|---|---|
| 14 | ທ່ານ ນ. ດູນດີ ຈັນທະຈັກ | ກົມພົວພັນສາກົນ | ຮ. ຫົວໜ້າກົມ | |
| 15 | ທ່ານ ພານຸສັກ ແກ່ນວົງພະຈັນ | ກົມຈັດຕັ້ງ ແລະ ພະນັກງານ | ຮ. ຫົວໜ້າກົມ | |
| 16 | ທ່ານ ວົງພະຈັນ ແສງສຸວັນ | ສະຖາບັນການທະນາຄານ | ຮ. ຫົວໜ້າ ສທຄ | |
| 17 | ທ່ານ ບຸນລ້ອມ ພົງຈະເລີນ | ທະນາຄານ ສົ່ງເສີມກະສິກຳ | ຜູ້ອຳນວຍການ | |
| 18 | ທ່ານ ບົວລຽນ ພົມມະວົງສາ | ທະນາຄານ ພັດທະນາລາວ | ຜູ້ອຳນວຍການ | |
| 19 | ທ່ານ ສີດາ ທຳມະວົງ | ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ | ຮ. ຫົວໜ້າສູນ | |
| 20 | ທ່ານ ວຸດທິ ເລື່ອນວິໄລວົງ | ທະນາຄານ ນະໂຍບາຍ | ຮ. ຜູ້ອຳນວຍການ | |
| 21 | ທ່ານ ວິໄລມິດ ອັກຄະວົງ | ກົມຄຸ້ມຄອງສະຖາບັນການເງິນ | ຮ. ຫົວໜ້າກົມ | |
| 22 | ທ່ານ ຈິນດາໄມ ວິໄລຫົງ | ໜ່ວຍງານຂໍ້ມູນຕ້ານການຟອກເງິນ | ຮ. ຫົວໜ້າກົມ | |
| 23 | ທ່ານ ພຸດສາລາ ອິນດາລາ | ກົມເຕັກໂນໂລຊີຂໍ້ມູນຂ່າວສານ | ຫົວໜ້າພະແນກ | |
| 24 | | | | |
| 25 | | | | |
| 26 | | | | |
| 27 | | | | |
| 28 | | | | |
| 29 | | | | |

**ຜູ້ຕິດຕາມ**

ຄຳເສີຍ ທົງສະຫວັດ